ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----------===000===----------

ກະຊວງການເງິນ

ກົມຄຸ້ມຄອງຊັບສິນຂອງລັດ

ເລກທີ 0094/ກງ,ຊລ

ນະຄອນຫລວງວຽງຈັນ, ວັນທີ 2 2 OCT 2013

# ແຈ້ງການແນະນຳ

ເຖິງ : ພະແນກການເງິນແຂວງ, ນະຄອນຫລວງວຽງຈັນ, ຫ້ອງການຄຸ້ມຄອງຊັບສິນຂອງລັດແຂວງ, ຂະແໜງການຂອງລັດທີ່ກ່ຽວຂ້ອງ ແລະ ຜູ້ປະກອບການ.

ເລື່ອງ: ການຈັດຕັ້ງປະຕິບັດ ຄຳສັ່ງແນະນຳ ຂອງ ທ່ານ ລັດຖະມົນຕີວ່າການ ກະຊວງການເງິນ ສະບັບ ເລກທີ 1765/ກງ, ລົງວັນທີ 04 ກໍລະກົດ 2013 ວ່າດ້ວຍ ເອົາໃຈໃສ່ຄຸ້ມຄອງການສົ່ງອອກໄມ້ເພື່ອເກັບລາຍຮັບເຂົ້າງົບປະມານ ຢ່າງຖືກຕ້ອງ, ຄົບຖ້ວນ, ທັນເວລາ.

- ອີງຕາມ ກົດໝາຍ ວ່າດ້ວຍຊັບສິນຂອງລັດ ສະບັບປັບປຸງ ເລກທີ 14 /ສພຊ,ລົງວັນທີ 5/7/2012.
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ກະຊວງການເງິນ ສະບັບເລກທີ 199/ກງ,ຊລ, ລົງວັນທີ 21 ມັງກອນ 2013 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມຄຸ້ມຄອງຊັບສິນຂອງລັດ.
- ອີງຕາມ ຄຳສັ່ງແນະນຳ ຂອງ ທ່ານ ລັດຖະມົນຕີວ່າການ ກະຊວງການເງິນ ສະບັບເລກທີ 1765/ກງ, ລົງວັນທີ 04 ກໍ ລະ ກົດ 2013 ວ່າດ້ວຍ ເອົາໃຈໃສ່ຄຸ້ມຄອງການສົ່ງອອກໄມ້ເພື່ອເກັບລາຍຮັບເຂົ້າງົບປະມານ ຢ່າງຖືກຕ້ອງ, ຄົບຖ້ວນ, ທັນເວລາ.

ກົມຄຸ້ມຄອງຊັບສິນຂອງລັດ ກະຊວງການເງິນ ອອກແຈ້ງການແນະນຳ ການຈັດຕັ້ງປະຕິບັດ ຄຳສັ່ງແນະນຳ ຂອງ ທ່ານ ລັດຖະມົນຕີວ່າການ ກະຊວງການເງິນ ສະບັບ ເລກທີ 1765/ກງ, ລົງວັນທີ 04 ກໍລະກົດ 2013 ເປັນອັນລະອຽດ ຄື:

1. ໃຫ້ຫ້ອງການຄຸ້ມຄອງຊັບສິນຂອງລັດ ເປັນເຈົ້າການສົມທົບກັບຂະແໜງການຂອງລັດທີ່ກ່ຽວຂ້ອງ ກວດກາໄມ້ທີ່ໄດ້ຮັບອະນຸຍາດສົ່ງອອກ ທຸກປະເພດ ເຊັ່ນ: ໄມ້ທ່ອນ, ຕໍໄມ້, ປຸດໄມ້, ໄມ້ແປຮູບ, ໄມ້ເຄິ່ງສຳເລັດຮູບ ແລະ ໄມ້ສຳເລັດຮູບ (ບໍ່ລວມໄມ້ສວນປູກ) ແຕ່ຫົວທີໂລດ ໂດຍໃຫ້ປະຕິບັດ ດັ່ງນີ້:

   - ກ່ອນທີ່ຈະສົ່ງໄມ້ອອກຕ່າງປະເທດ ພາຍຫລັງທີ່ໄດ້ຮັບອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງແລ້ວ ຜູ້ປະກອບການຕ້ອງແຈ້ງໃຫ້ພະນັກງານຄຸ້ມຄອງຊັບສິນ ສົມທົບກັບ ຂະແໜງ ອຸດສາຫະກຳ-ການຄ້າ ແລະ ຂະແໜງ ກະສິກຳ-ປ່າໄມ້ ລົງກວດກາໄມ້ຕົວຈິງ.
   - ກວດກາຄືນການມອບພັນທະໄມ້ ແລະ ການມອບອາກອນ, ຖ້າເປັນ ໄມ້ແປຮູບ, ໄມ້ເຄິ່ງສຳເລັດຮູບ ແລະ ໄມ້ສຳເລັດຮູບ ໃຫ້ອອກໃບຢັ້ງຢືນການມອບພັນທະໄມ້ຄືນໃໝ່ ໂດຍໃຫ້ລະບຸທີ່ມາຂອງໄມ້ແປຮູບ, ໄມ້ເຄິ່ງສຳ ເລັດຮູບ ແລະ ໄມ້ສຳເລັດຮູບ ທີ່ຈະມີການເຄື່ອນຍ້າຍໃຫ້ຊັດເຈນ ແລະ ຕິດຕາມ ທັກລົບ ກັບ ໄມ້ທ່ອນ ທີ່ນຳ ມາທຳການຜະລິດ.

- ກວດກາສັນຍາ ຊື້-ຂາຍໄມ້ ລະຫວ່າງ ຜູ້ຂາຍ ແລະ ຜູ້ຊື້ຢູ່ຕ່າງປະເທດ ໃນນັ້ນໃຫ້ລະບຸການຊໍາລະເງິນ ໂດຍຜ່ານທະນາຄານ ທີ່ດໍາເນີນທຸລະກິດຖືກຕ້ອງຕາມກົດໝາຍ ຢູ່ ສປປ ລາວ, ສັນຍາດັ່ງກ່າວ ຕ້ອງໄດ້ຈົດທະບຽນນໍາຂະແໜງຄຸ້ມຄອງຊັບສິນຂອງລັດ.
- ສົມທົບກັບ ຂະແໜງອຸດສະຫະກໍາ-ການຄ້າ ແລະ ຂະແໜງກະສິກໍາ-ປ່າໄມ້ ສ້າງບົດບັນທຶກ ກ່ຽວກັບ ການເອົາໄມ້ຂຶ້ນລົດ ປະເພດໄມ້ທ່ອນ, ຕໍໄມ້, ປຸດໄມ້, ໄມ້ແປຮູບ, ໄມ້ເຄິ່ງສໍາເລັດຮູບ ແລະ ໄມ້ສໍາເລັດຮູບ ກ່ອນການເຄື່ອນຍ້າຍ ອອກຈາກສະໜາມສອງ, ໂຮງງານປຸງແຕ່ງໄມ້ ແລະ ບ່ອນອື່ນໆ ໄປຕ່າງປະເທດ ໂດຍມີການກວດກາລະອຽດໃຫ້ຖືກຕ້ອງຕາມຈໍານວນ, ບໍລິມາດ ແລະ ຊະນິດໄມ້ ທີ່ເອກະສານລະບຸໄວ້, ພ້ອມນີ້ໃຫ້ເຊັນຢັ້ງຢືນການໜີບກົ່ວ ໂດຍໃຫ້ອະທິບາຍຈຸດໜີບກົ່ວໃສ່ບົດບັນທຶກສະບັບນີ້.

2. ການເຄື່ອນຍ້າຍໄມ້ອອກຕ່າງປະເທດ ນອກຈາກເອກະສານທີ່ຂະແໜງການກ່ຽວຂ້ອງ ໄດ້ອອກອະນຸຍາດແລ້ວ ຕ້ອງມີເອກະສານຂອງຂະແໜງ ຄຸ້ມຄອງຊັບສິນຂອງລັດ ເພີ່ມອີກ, ຖ້າບໍ່ມີເອກະສານນີ້ບໍ່ອະນຸຍາດໃຫ້ສົ່ງອອກ ຄື:

- ສັນຍາ ຊື້-ຂາຍໄມ້ ລະຫວ່າງ ຜູ້ຂາຍ ແລະ ຜູ້ຊື້ຢູ່ຕ່າງປະເທດ ທີ່ໄດ້ຈົດທະບຽນນໍາຂະແໜງຊັບສິນ.
- ໃບຢັ້ງຢືນການເສຍພັນທະໄມ້, ພັນທະອາກອນ ຕາມທີ່ໄດ້ລະບຸໄວ້ຢູ່ ຂໍ້ 1 (ມີແບບຟອມສະເພາະ).
- ບົດບັນທຶກການກວດກາໄມ້ຂຶ້ນລົດ ທີ່ໄດ້ມີການຢັ້ງຢືນການໜີບກົ່ວ ຕາມທີ່ໄດ້ລະບຸໄວ້ຢູ່ ຂໍ້ 1 (ມີແບບຟອມສະເພາະ).

3. ລົດບັນທຸກໄມ້ ທີ່ເຄື່ອນຍ້າຍໄມ້ອອກຕ່າງປະເທດ ທຸກຄັນຕ້ອງໄດ້ໜີບກົ່ວ ຂອງຂະແໜງຄຸ້ມຄອງຊັບສິນຂອງລັດເພື່ອປ້ອງກັນບໍ່ມີການລັກລອບໄມ້ເວລາເຄື່ອນຍ້າຍຕາມເສັ້ນທາງ ເຊິ່ງມີລາຍລະອຽດ ກ່ຽວກັບ ເຄື່ອງໜີບກົ່ວ, ເມັດກົ່ວ, ເສັ້ນລວດ ແລະ ວິທີໜີບກົ່ວ ດັ່ງລຸ່ມນີ້:

- ເຄື່ອງໜີບກົ່ວຂອງຂະແໜງຄຸ້ມຄອງຊັບສິນຂອງລັດ ແມ່ນມອບຄວາມຮັບຜິດຊອບໃຫ້ ຫົວໜ້າຫ້ອງການຄຸ້ມຄອງຊັບສິນຂອງລັດ ປະຈໍາແຂວງ ແລະ ນະຄອນຫລວງວຽງຈັນ ເປັນຜູ້ຄຸ້ມຄອງນໍາໃຊ້, ເຄື່ອງໜີບກົ່ວພາຍຫລັງໜີບເມັດກົ່ວແລ້ວ ເບື້ອງໜຶ່ງຂອງເມັດກົ່ວຈະເຫັນສັນຍາລັກ ຊ ລ ແລະ ອີກເບື້ອງໜຶ່ງ ຈະເຫັນ ເປັນ ເລກ 1 ຫາ ເລກ 17 ແຕ່ລະເລກໝາຍເຖິງ ລະຫັດຂອງແຕ່ລະແຂວງ ຕາມການແບ່ງ ເຂດຂອງ ສະພາແຫ່ງຊາດ.
- ເມັດກົ່ວທີ່ບໍ່ທັນໄດ້ໜີບມີເສັ້ນຜ່າກາງ 0,4 ຊມ ແລະ ມີຮູສໍາລັບສອດເສັ້ນລວດໃສ່ສອງສົ້ນ, ເວລາໜີບແລ້ວຈະມີເສັ້ນຜ່າກາງປະມານ 0,6 ຊມ ແລະ ບໍ່ສາມາດຖອດເສັ້ນລວດອອກມາໄດ້.
- ເສັ້ນລວດ ເປັນເສັ້ນລວດທີ່ເຮັດດ້ວຍກົ່ວຢ່າງດີສອງເສັ້ນ, ເສັ້ນໜຶ່ງເປັນເສັ້ນກາງ ແລະ ອີກເສັ້ນໜຶ່ງພັນອ້ອມຕະຫລອດເສັ້ນ.
- ຫລັງຈາກຄະນະກໍາມະການໄດ້ກວດກາການເອົາໄມ້ປະເພດ ໄມ້ທ່ອນ, ຕໍໄມ້, ໄມ້ແປຮູບ, ໄມ້ເຄິ່ງສໍາເລັດຮູບ ແລະ ໄມ້ສໍາເລັດຮູບ ຂຶ້ນລົດແລ້ວ ຕ້ອງເຮັດບົດບັນທຶກກວດກາ, ຫລັງຈາກນັ້ນໃຫ້ໜີບເມັດກົ່ວພ້ອມກັບເສັ້ນລວດເພື່ອບໍ່ໃຫ້ມີການໄຂຫລັງຈາກກວດກາແລ້ວ ໂດຍແມ່ນເຈົ້າໜ້າທີ່ຂອງຂະແໜງຄຸ້ມຄອງຊັບສິນຂອງລັດ ຢູ່ແຂວງຕົ້ນທາງຂອງໄມ້ທີ່ຈະມີການສົ່ງອອກເປັນຜູ້ໜີບກົ່ວ.
- ລົດບັນທຸກໄມ້ ປະເພດ ໄມ້ທ່ອນ ແລະ ຕໍໄມ້, ຕ້ອງໃຊ້ຜ້າບັດປົກລົດ ຫລັງຈາກນັ້ນໃຫ້ໜີບເມັດກົ່ວພ້ອມກັບເສັ້ນລວດທັງໝົດ ຈໍານວນ 8 ຈຸດ, ໃສ່ສົ້ນຂອງຜ້າບັດປົກລົດ ບ່ອນທີ່ພັບຈອດກັນຕິດໃສ່ລົດ ຫລື ບ່ອນອື່ນໆອີກ ເພື່ອຫລີກເວັ້ນການເປີດຜ້າບັດປົກລົດເວລາເຄື່ອນຍ້າຍ.

- ລົດບັນທຸກໄມ້ ປະເພດ ໄມ້ແປຮູບ, ໄມ້ເຄິ່ງສຳເລັດຮູບ ແລະ ໄມ້ສຳເລັດຮູບ ທີ່ໃຊ້ຜ້າບັດປົກເທິງລົດໃຫ້ໜີບເມັດກົ່ວພ້ອມກັບເສັ້ນລວດ ທັງໝົດ 8 ຈຸດ, ໃສ່ສົ້ນຂອງຜ້າບັດປົກລົດບ່ອນທີ່ພັບຈອດ ກັນຕິດໃສ່ລົດ ຫລື ບ່ອນອື່ນໆອີກ ເພື່ອລີກເວັ້ນການເປີດຜ້າບັດປົກລົດເວລາເຄື່ອນຍ້າຍ.
- ລົດບັນທຸກໄມ້ ປະເພດ ໄມ້ແປຮູບ, ໄມ້ເຄິ່ງສຳເລັດຮູບ ແລະ ໄມ້ສຳເລັດຮູບ, ທີ່ເປັນຕູ້ຄອນເທັນເນີ ໃຫ້ໜີບເມັດກົ່ວພ້ອມກັບເສັ້ນລວດ ທັງໝົດ ຈຳນວນ 4 ຈຸດ, ໃສ່ບ່ອນໃສ່ກະແຈຕູ້ຄອນເທັນເນີ ຫລື ບ່ອນອື່ນໆອີກ ເພື່ອລີກເວັ້ນການເປີດຕູ້ຄອນເທັນເນີເວລາເຄື່ອນຍ້າຍ.
- ຄ່າບໍລິການໃນການໜີບກົ່ວແຕ່ລະຄັ້ງ 50.000 ກີບ/ຄັນ (ຫ້າສິບພັນກີບຕໍ່ຄັນ), ເຈົ້າຂອງໄມ້ຕ້ອງເປັນຜູ້ຮັບຜິດຊອບໃນການເສຍຄ່າບໍລິການດັ່ງກ່າວ ຈຸດປະສົງກໍແມ່ນນຳໃຊ້ເງິນດັ່ງກ່າວຊື້ເມັດກົ່ວ ແລະ ເສັ້ນລວດ ເພື່ອຮັບປະກັນການຈັດຕັ້ງປະຕິບັດວຽກງານໃນຕໍ່ໜ້າ.
- ພາຍຫຼັງໄດ້ສຳເລັດການໜີບກົ່ວແຕ່ລະຄັ້ງແລ້ວ ໃຫ້ຫົວໜ້າຫ້ອງການຄຸ້ມຄອງຊັບສິນຂອງລັດ ເປັນຜູ້ເກັບຮັກສາເຄື່ອງໜີບກົ່ວ, ເມັດກົ່ວ, ເສັ້ນລວດ ໄວ້ເປັນຢ່າງດີ ແລະ ສະຫລຸບລາຍງານການຈັດຕັ້ງປະຕິບັດ ການນຳໃຊ້ເມັດກົ່ວ, ເສັ້ນລວດ ພ້ອມທັງຈຳນວນລົດທີ່ໄດ້ໜີບເມັດກົ່ວ ເປັນເດືອນ, ງວດ ແລະ ປີ ສົ່ງໃຫ້ກົມຄຸ້ມຄອງຊັບສິນຂອງລັດ ເພື່ອສັງລວມລາຍງານຂັ້ນເທິງ.

4. ພາຍຫລັງໄດ້ສຳເລັດການໜີບກົ່ວແລ້ວ ຫາກມີການກວດກາ ຖ້າເຫັນວ່າມີໄມ້ເກີນຕາມຈຳນວນທີ່ໄດ້ຮັບອະນຸຍາດ ໃຫ້ຫ້ອງການຄຸ້ມຄອງຊັບສິນຂອງລັດ ຄິດໄລ່ຄ່າພັນທະໄມ້ຄືນ ພ້ອມດ້ວຍຄ່າປັບໃໝ ຕາມລະບຽບການຂອງຈຳນວນ ໄມ້ທີ່ເກີນເຂົ້າງົບປະມານ.
5. ໃຫ້ຫ້ອງການຄຸ້ມຄອງຊັບສິນຂອງລັດ ພະແນກການເງິນ ແຂວງ ແລະ ນະຄອນຫລວງວຽງຈັນ ເປັນເຈົ້າການສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງການເຜີຍແຜ່ ຄຳສັ່ງແນະນຳ ຂອງທ່ານລັດຖະມົນຕີ ກະຊວງການເງິນ ສະບັບເລກທີ 1765/ກງ, ລົງວັນທີ 04 ກໍລະກົດ 2013 ແລະ ແຈ້ງການແນະນຳສະບັບນີ້ ໃຫ້ທຸກພາກສ່ວນຮັບຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ ພ້ອມທັງລາຍງານສະພາບ ການຈັດຕັ້ງປະຕິບັດ ໃຫ້ກົມຄຸ້ມຄອງຊັບສິນຂອງລັດຊາບ ເປັນແຕ່ລະໄລຍະ.
6. ຫ້າມເຈົ້າໜ້າທີ່ຂະແໜງຊັບສິນຂອງລັດ ສົມຮູ້ຮ່ວມຄິດກັບຜູ້ປະກອບການ ຫລື ລະເລີຍການປະຕິບັດໜ້າທີ່.
7. ກຳນົດເວລາຈັດຕັ້ງປະຕິບັດ ແມ່ນໃຫ້ເລີ່ມນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງການແນະນຳມາຍັງບັນດາທ່ານ ເພື່ອພ້ອມກັນຈັດຕັ້ງປະຕິບັດ ຢ່າງເຂັ້ມງວດ.

ຫົວໜ້າກົມຄຸ້ມຄອງຊັບສິນຂອງລັດ

ຈັນທະພອນ ພົດທະສອນ